ສົນທິສັນຍາ
ລະຫວ່າງ
ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ,
ສາທາລະນະລັດ ປະຊາຊົນຈີນ ແລະ
ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ
ວ່າດ້ວຍການກຳນົດຈຸດຄົບເສັ້ນຊາຍແດນສາມປະເທດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ສາທາລະນະລັດ ປະຊາຊົນຈີນ ແລະ ສາທາລະນະລັດ ສັງຄົມນິຍົມຫວຽດນາມ (ຕໍ່ໄປນີ້ເອີ້ນຫຍໍ້ວ່າ "ພາຄີສົນທິສັນຍາສາມຝ່າຍ") ໄດ້ບັນລຸຂໍ້ຕົກລົງ ກ່ຽວກັບການກຳນົດທີ່ຕັ້ງຈຸດຄົບເສັ້ນຊາຍແດນ ລະຫວ່າງ ສາມປະເທດ ດັ່ງນີ້:

ມາດຕາ 1

ຈຸດຄົບເສັ້ນຊາຍແດນສາມປະເທດ ລະຫວ່າງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ສາທາລະນະລັດ ປະຊາຊົນຈີນ ແລະ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ(ຕໍ່ໄປນີ້ເອີ້ນຫຍໍ້ວ່າ "ຈຸດຄົບເສັ້ນຊາຍແດນສາມປະເທດ") ຕັ້ງຢູ່ເທິງຈຸດສູງ 1864 ແມັດ ຂອງພູຄວາມລາຊານ (ຝ່າຍຈີນເອີ້ນວ່າ "ສີ ເຊີ່ງ ຕາ ຊານ", ຝ່າຍຫວຽດນາມເອີ້ນວ່າ "ຄວາມລາຊານ"). ຈຸດດັ່ງກ່າວຕັ້ງຢູ່ຫ່າງຈາກຈຸດສູງ 1354 ແມັດ ໃນດິນແດນຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄປທາງທິດຕາເວັນອອກ ອ່ຽງໄປທິດຕາເວັນອອກສ່ຽງເໜືອ 2,08 ກິໂລແມັດ, ຫ່າງຈາກຈຸດສູງ 869 ແມັດ ໃນດິນແດນຂອງ ສາທາລະນະລັດ ປະຊາຊົນຈີນ ໄປທາງທິດໃຕ້ ອ່ຽງໄປທິດ ຕາວັນຕົກ ສ່ຽງໃຕ້ 2,73 ກິໂລແມັດ, ຫ່າງຈາກຈຸດສູງ 1431 ແມັດ ໃນດິນແດນຂອງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ໄປທາງທິດຕາເວັນຕົກ ອ່ຽງໄປທິດຕາເວັນຕົກສ່ຽງເໜືອ 2,32 ກິໂລແມັດ. ຕິວເລກໄລຍະຫ່າງທີ່ກ່າວມາຂ້າງເທິງນີ້ ແມ່ນວັດແທກຈາກແຜນທີ່ຕິດແນບສົນທິສັນຍາສະບັບນີ້.

ຈຸດຄົບເສັ້ນຊາຍແດນສາມປະເທດມີຄ່າພິກັດພູມສາດ ຄື: ເສັ້ນຂະໜານ B= 22°24′02. 295″ ເສັ້ນແວ່ງ L= 102°08′38.109″, ຄ່າພິກັດໜ້າພຽງ: X= 2480959.98 ແມັດ, Y= 205823.50 ແມັດ. ຄ່າພິກັດທີ່ກ່າວມາຂ້າງເທິງນີ້ ແມ່ນໄດ້ມາຈາກການວັດແທກຢູ່ພູມີປະເທດຕົວຈິງ.

ທີ່ຕັ້ງຂອງຈຸດຄົບເສັ້ນຊາຍແດນສາມປະເທດ ໄດ້ແຕ້ມເຄື່ອງໝາຍເປັນຮູບວົງມົນສີແດງ (ເມັດສີແດງຢູ່ໃຈກາງ) ໃສ່ແຜນທີ່ມາດຕາສ່ວນ 1:50.000 ທີ່ສາມຝ່າຍໄດ້ຕົກລົງຮ່ວມກັນ. ແຜນທີ່ດັ່ງກ່າວຕິດແນບສົນທິສັນຍາສະບັບນີ້ ເປັນພາກສ່ວນໜຶ່ງ ທີ່ບໍ່ສາມາດຕັດແຍກອອກຈາກກັນໄດ້.

ມາດຕາ 2

1. ພາຄີສົນທິສັນຍາສາມຝ່າຍໄດ້ຮ່ວມກັນປັກຫຼັກໝາຍ 1 ຫຼັກ ທີ່ເຮັດດ້ວຍຫີນກຣານິດໃສ່ຈຸດຄົບເສັ້ນຊາຍແດນສາມປະເທດ.

2. ฝ่ายใดฝ่ายหนึ่งบ่มีสิดปุ่งแปงที่ตั้ง, ลักสะนะรูบแบบ ແລະ ຂະໜາດ ຂອງຫຼັກໝາຍຕາມລຳພັງແຕ່ຝ່າຍດຽວ ລວມທັ້ງການປັກຫຼັກໝາຍຊາຍແດນອື່ນໆ ອີກ.

3. ພາຄີສົນທິສັນຍາສາມຝ່າຍມີໜ້າທີ່ຮ່ວມມືຊຶ່ງກັນ ແລະ ກັນ ໃນການປົກປັກຮັກສາຫຼັກໝາຍ ຊາຍແດນ ແລະ ໃຊ້ມາດຕະການທີ່ຈຳເປັນ ເພື່ອປ້ອງກັນບໍ່ໃຫ້ຫຼັກໝາຍຊາຍແດນ ຖືກເຄື່ອນຍ້າຍ, ເປ່ເພ ຫຼື ຖືກທຳລາຍ.

4. ຖ້າຫາກຝ່າຍໃດຝ່າຍໜຶ່ງ ພົບເຫັນຫຼັກໝາຍຖືກເຄື່ອນຍ້າຍ, ເປ່ເພ ຫຼື ຖືກທຳລາຍຕ້ອງ ແຈ້ງໃຫ້ອີກສອງຝ່າຍຊາບ ຢ່າງທັນການ. ພາຄີສົນທິສັນຍາສາມຝ່າຍຕ້ອງດຳເນີນການຟື້ນ ຟູ, ສ້ອມແປງ ຫຼື ປັກຫຼັກໝາຍໃໝ່ຢູ່ທີ່ຕັ້ງເດີມ ດັ່ງທີ່ໄດ້ກຳນົດໄວ້ໃນ ມາດຕາ 1 ຂອງ ສົນທິສັນຍາສະບັບນີ້ ແລະ ຕາມລັກສະນະຮູບແບບ, ຂະໜາດ ທີ່ໄດ້ກຳນົດໄວ້ໃນ "ຮູບ ແບບຫຼັກໝາຍຈຸດຄົບເສັ້ນຊາຍແດນ ລະຫວ່າງ ລາວ-ຈີນ-ຫວຽດນາມ" ທີ່ຕິດແນບ ສົນທິສັນຍາສະບັບນີ້, ພ້ອມທັ້ງເຮັດບົດບັນທຶກຮ່ວມກັນໄວ້.

ມາດຕາ 3

ເພື່ອເຮັດໃຫ້ສົນທິສັນຍາສະບັບນີ້ມີຜົນບັງຄັບໃຊ້, ພາຄີສົນທິສັນຍາສາມຝ່າຍຕ້ອງດຳເນີນຕາມ ຂັ້ນຕອນກົດໝາຍພາຍໃນປະເທດຂອງຕົນໃຫ້ເປັນທີ່ຮຽບຮ້ອຍ, ຫຼັງຈາກນັ້ນ ຈຶ່ງແຈ້ງໃຫ້ກັນ ຊາບ ຢ່າງເປັນລາຍລັກອັກສອນ.

ສົນທິສັນຍາສະບັບນີ້ຈະມີຜົນບັງຄັບໃຊ້ ນັບແຕ່ມື້ ທີ່ສິ່ງຈົດໝາຍແຈ້ງໃຫ້ກັນຊາບ ສະບັບສຸດ ທ້າຍ ເປັນຕົ້ນໄປ.

ສົນທິສັນຍາສະບັບນີ້ ລົງນາມທີ່ ນະຄອນຫຼວງປັກກິ່ງ ໃນວັນທີ 10 ຕຸລາ 2006, ເຮັດເປັນ ສາມຕົ້ນສະບັບ, ແຕ່ລະສະບັບເປັນພາສາລາວ, ພາສາຈີນ ແລະ ພາສາຫວຽດ. ທັ້ງສາມພາສາມີ ຄຸນຄ່າເທົ່າທຽມກັນ.

ຜູ້ຕາງໜ້າທີ່ມີອຳນາດເຕັມ	ຜູ້ຕາງໜ້າທີ່ມີອຳນາດເຕັມ	ຜູ້ຕາງໜ້າທີ່ມີອຳນາດເຕັມ
ແຫ່ງ ສາທາລະນະລັດ	ແຫ່ງ ສາທາລະນະລັດ	ແຫ່ງ ສາທາລະນະລັດ
ປະຊາທິປະໄຕ ປະຊາຊົນລາວ	ປະຊາຊົນຈີນ	ສັງຄົມນິຍົມ ຫວຽດນາມ
ພົງສະຫວັດ ບຸບຜາ	ອູ ຕ້າ ເວີ	ຫວູ ຢົ້ງ
ລັດຖະມົນຕີຊ່ວຍວ່າການ	ລັດຖະມົນຕີຊ່ວຍວ່າການ	ລັດຖະມົນຕີຊ່ວຍວ່າການ
ກະຊວງການຕ່າງປະເທດ	ກະຊວງການຕ່າງປະເທດ	ກະຊວງການຕ່າງປະເທດ

ຮູບແບບໜ້າໝາຍຈຸດຄົບເສັ້ນຊາຍແດນລະຫວ່າງສາມປະເທດ ລາວ-ຈີນ-ຫວຽດນາມ

ກາໝາຍຊາດເຮັດດ້ວຍໂລຫະ
ເສັ້ນຜ່າກາງ 30 ຊມ

CM.



ແຜນທີ່ຕິດແນບສົນທິສັນຍາວ່າດ້ວຍຈຸດຄົບເສັ້ນຊາຍແດນ ລະຫວ່າງສາມປະເທດ ລາວ-ຈີນ-ຫວຽດນາມ

中越老三国国界交界点条约附图

BẢN ĐỒ ĐÍNH KÈM HIỆP ƯỚC VỀ ĐIỂM NGÃ BA BIÊN GIỚI VIỆT NAM - LÀO - TRUNG QUỐC



1:50000

Bản đồ được biên tập bằng tài liệu bay chụp tháng 3/1997, điều vẽ tại thực địa tháng 3 - 5/2000, bản đồ gốc 1:50 000 sử dụng trong công tác PGCM biên giới Việt Nam - Trung Quốc được đo vẽ tháng 12/2000.

Phép chiếu hình Gauss, hệ tọa độ WGS - 84, chuẩn độ cao EGM 96, khoảng cao đều đường bình độ là 20m.

ຜູ້ຕາງໜ້າທີ່ມີອຳນາດເຕັມ	中华人民共和国	ĐẠI DIỆN TOÀN QUYỀN
ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ	全 权 代 表	NƯỚC CỘNG HOÀ XÃ HỘI CHỦ NGHĨA VIỆT NAM